# ຜ-ຟຟລ ເຂົ້າຮ່ວມຮັບລາງວັນໃນງານ The Annual Global Economics Awards 2022

ໃນວັນທີ 20 ມັງກອນ 2023 ທີ່ບາງກອກ ແຫ່ງ ປະເທດໄທ ຕາງໜ້າບໍລິສັດ ຜະລິດ-ໄຟຟ້າລາວ ມະຫາຊົນ (ຜ-ຟຟລ) ໄດ້ເຂົ້າຮ່ວມຮັບລາງວັນໃນງານ The Annual Global Economics Awards 2022, ສາຂາ Most Sustainable Practices in Energy Laos

ລາງວັນດັ່ງກ່າວນີ້ ເປັນສາຂາລາງວັນທີ່ມອບໃຫ້ແກ່ບໍລິສັດ ທີ່ມີແນວທາງການດໍາເນີນທຸລະກິດແບບຍືນຍົງ ໂດຍສະເພາະແມ່ນໃນຂະແໜງພະລັງງານ ໃນ ສປປ ລາວ

The Global Economics (TGE) ເປັນບໍລິສັດສື່ໂຄສະນາສິ່ງພິມທາງການເງິນ ຂອງປະເທດອັງກິດ ແລະ ຈັດພິມວາລະສານກ່ຽວກັບການເງິນໃນຫຼາກຫຼາຍຂະແໜງອຸດສະຫະກໍາຕ່າງໆໃນທົ່ວໂລກ.

ພິທີມອບ-ຮັບລາງວັນດັ່ງກ່າວ ໄດ້ຈັດຂຶ້ນທີ່ ໂຮງແຮມ AVANI Riverside ແລະ ຕາງໜ້າ ຜ-ຟຟລ ເຂົ້າຮ່ວມຮັບລາງວັນໃນຄັ້ງນີ້ ນໍາໂດຍ ທ່ານ ນ. ສຸກສັນ ພົງພິລາ ຮອງຜູ້ອໍານວຍໃຫຍ່ ສາຍງານບໍລິຫານ ຜ-ຟຟລ ແລະ ຜູ້ອໍານວຍການ ຝ່າຍການເງິນ ຜ-ຟຟລ ພ້ອມດ້ວຍຄະນະ.




